ໜ່ວຍງານດ້ານການປົກຄອງ ຈັດກອງປະຊຸມທາງດ້ານວິຊາການ ຂອງໜ່ວຍງານຫຍ່ອຍດ້ານການປັບປຸງທາງລັດຖະການ ແລະ ການມີສ່ວນຮ່ວມຂອງປະຊາຊົນ.

ໃນຕອນເຊົ້າຂອງວັນທີ 10 ຕຸລາ 2025, ຫ້ອງການ **ຄະນະຈັດຕັ້ງສູນກາງພັກ**, ໃນນາມຫ້ອງການກອງເລຂາຂອງໜ່ວຍງານດ້ານການປົກຄອງ (GSWG-Governance Sector Working Group), ໄດ້ຈັດກອງປະຊຸມວິຊາການຂອງໜ່ວຍງານຍ່ອຍດ້ານການປັບປຸງທາງລັດຖະການ ແລະ ການມີສ່ວນຮ່ວມຂອງປະຊາຊົນ (Sub PSI & CE-Public Service Improvement and Citizen Engagement Sub Sector Working Group). ກອງປະຊຸມຄັ້ງນີ້ ໄດ້ຮັບກຽດເປັນປະທານໂດຍ ***ທ່ານ ວັນນະ ບຸບຜາ*** ຫົວໜ້າຫ້ອງການ ຄຈສພ, ຫົວໜ້າກອງເລຂາຂອງ ໜ່ວຍງານດ້ານການປົກຄອງ. ມີຫົວໜ້າກົມ, ຮອງຫົວໜ້າກົມ, ຄະນະພະແນກ ແລະ ວິຊາການຈາກບັນດາກະຊວງ ແລະ ອົງການອ້ອມຂ້າງສູນກາງ ພ້ອມດ້ວຍບັນດາຜູ້ຕາງໜ້າຈາກ ຈາກບັນດາສະຖານທູດ, ບັນດາຄູ່ຮ່ວມພັດທະນາ ແລະ ການຈັດຕັ້ງສາກົນ ປະຈຳ ສປປ ລາວ ເປັນຕົ້ນແມ່ນ: ອົງການ ສປຊ, ສະຫະພາບເອີຣົບ, ອົງການຮ່ວມມືເພື່ອການພັດທະນາ ຂອງປະເທດສະວິດເຊີແລນ ແລະ ອົງການ **GIZ** ແລະ ຕາງໜ້າຈາກອົງການຈັດຕັ້ງທາງສັງຄົມລາວ ຈຳນວນ 60 ທ່ານທີ່ເຂົ້າຮ່ວມ.

ຈຸດປະສົງຫຼັກຂອງກອງປະຊຸມ ແມ່ນຈະໄດ້ນຳສະເໜີ-ລາຍງານເຖິງຜົນການປັບປຸງກົງຈັກການຈັດຕັ້ງ ແລະ ສິ່ງທ້າທາຍຕ່າງໆ ໃນການຈັດຕັ້ງປະຕິບັດ ໃນໄລຍະ 3 ເດືອນທີ່ຜ່ານມາ ແລະ ວາງທິດທາງໃນການສືບຕໍ່ຈັດຕັ້ງປະຕິບັດວຽກງານປັບປຸງກົງຈັກການຈັດຕັ້ງ ໃນຕໍ່ໜ້າ ແລະ ສ້າງ**ຄວາມຮັບຮູ້ ແລະ ເຂົ້າໃຈ** ກ່ຽວກັບສະພາບການປັບປຸງກົງຈັກການຈັດຕັ້ງ ຂອງລັດຖະບານ ໃຫ້ແກ່ບັນດາຜູ້ເຂົ້າຮ່ວມຈາກບັນດາກະຊວງ-ອົງການ,ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສັງຄົມລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ ບັນດາມະຕິ, ຄຳສັ່ງ ແລະ ຂໍ້ຕົກລົງ ຂອງພັກ-ລັດຖະບານ ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງລັດຖະບານ ທີ່ເປັນພື້ນຖານໃນການປັບປຸງກົງຈັກລັດຖະບານ ໃນຄັ້ງນີ້ ແລະ ພ້ອມດຽວກັນນັ້ນ, ກໍເປັນເວທີສົນທະນາປຶກສາຫາລື ອະທິບາຍ ແລະ ຊີ້ແຈງ ຈາກກົມພັດທະນາການບໍລິຫານລັດ ກ່ຽວກັບບັນຫາສິ່ງທ້າທາຍ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການປັບປຸງກົງຈັກການຈັດຕັ້ງ ໃນຄັ້ງນີ້ ຊຶ່ງເຫັນວ່າ ແຕ່ລະພາກສ່ວນ ມີຄວາມສົນໃຈແລກປ່ຽນຄຳເຫັນຢ່າງເປັນເອກະພາບ ດ້ວຍບັນຍາກາດອັນດີ.

ທ່ານ ວັນນະ ບຸບຜາ ຫົວໜ້າຫ້ອງການ ຄະນະຈັດຕັ້ງສູນກາງພັກ ແລະ ໃນນາມກອງເລຂາໜ່ວຍງານດ້ານການປົກຄອງ ໄດ້ກ່າວຕໍ່ກອງປະຊຸມວ່າ ການປັບປຸງກົງຈັກການຈັດຕັ້ງໃນຄັ້ງນີ້ ແມ່ນການປະຕິບັດແນວທາງການຈັດຕັ້ງ ຂອງພັກ ແລະ ລັດທັງສູນກາງ ແລະທ້ອງຖິ່ນ ໃຫ້ກະທັດຮັດ, ໂລ່ງລ່ຽນ, ມີປະສິດທິພາບ ແລະ ເຂັ້ມແຂງ , ເນື້ອແທ້ ແມ່ນການບໍລິຫານຈັດການອົງການ ເພື່ອນຳໃຊ້ຊັບພະຍາກອນຢ່າງປະຢັດ, ຄຸ້ມຄ່າ, ເກີດຜົນປະໂຫຍດສູງສຸດ ແລະ ຍືນຍົງ ແລະ ເພື່ອຮັບປະກັນ ໃນການຈັດຕັ້ງປະຕິບັດກິດຈະກຳ ຂອງແຕ່ລະພາກສ່ວນດຳເນີນໄປຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ໂດຍສະເພາະບັນດາກິດຈະກຳ ທີ່ໄດ້ການສະໜັບສະໜູນ ຂອງຄູ່ຮ່ວມພັດທະນາ ທີ່ຕິດພັນກັບການປັບປຸງກົງຈັກການຈັດຕັ້ງລັດຖະບານ ໃນຄັ້ງນີ້ ທ່ານ ຍັງໄດ້ຮຽກຮ້ອງໃຫ້ ຜູ້ເຂົ້າຮ່ວມກອງປະຊຸມທັງໝົດ ນຳເອົາເນື້ອໃນຈິດໃຈທີ່ໄດ້ແລກປ່ຽນໃນກອງປະຊຸມຄັ້ງນີ້ ໄປລາຍງານໃຫ້ແກ່ການຈັດຕັ້ງ ຂອງຕົນໄດ້ຮັບຊາບ ແລະ ຈັດຕັ້ງປະຕິບັດ ຕື່ມອີກ. ພາຍຫຼັງສຳເລັດກອງປະຊຸມວິຊາການ ທາງໜ່ວຍງານດ້ານການປົກຄອງຍັງຈະໄດ້ກະກຽມເນື້ອໃນເພື່ອລາຍງານຕໍ່ກອງປະຊຸມປະຈຳປີ ຂອງໜ່ວຍງານດ້ານການປົກຄອງ ແລະ ກອງປະຊຸມຂະບວນການໂຕະມົນ ຄັ້ງທີ 14 ຊຶ່ງຈະໄດ້ຈັດຂຶ້ນໃນກາງເດືອນພະຈິກ 2025 ນີ້.

ຂຽນຂ່າວໂດຍ: ທູນວິໄລ ອຸດົມສິນ

**Governance Sector Working Group Organizes Technical Meeting for the Sub-Sector Working Group on Public Service Improvement and Citizen Engagement**

On the morning of **October 10, 2025**, the Cabinet Office of the Central Committee for Organization and Personnel (CCOP), as the Secretariat for the **Governance Sector Working Group (GSWG)**, organized a technical meeting of the **Sub-Sector Working Group on Public Service Improvement and Citizen Engagement (Sub PSI & CE)**. The meeting was honored to be chaired by **Mr. Vanna Boupha**, Head of the Cabinet Office of the CCOP and Head of the GSWG Secretariat.

The participants included heads of departments, deputy heads of departments, heads of divisions, and technical staff from various Ministries and central agencies, along with representatives from embassies, development partners, and international organizations based in the Lao PDR, specifically: the **United Nations (UN)**, the **European Union (EU)**, the **Swiss Agency for Development and Cooperation (SDC)**, and **GIZ**, as well as representatives from NPAs/CSOs, totaling **60 participants**.

The main objectives of the meeting were to:

1. **Present and report** on the results of the organizational restructuring and the various challenges encountered during the implementation over the past three months.
2. **Lay out the future direction** for the continued implementation of the organizational restructuring work.
3. **Raise awareness and understanding** about the government's organizational restructuring situation among participants. This specifically focused on the **Resolutions, Orders, and Decisions** of the Party and the Government regarding the organizational restructuring, which form the basis for this current government restructuring.
4. Serve as a platform for **discussion, explanation, and clarification** by the **Department of Public Administration Development** regarding the challenges, conveniences, and difficulties in this restructuring process. It was noted that all sectors showed unified interest in exchanging views in a positive atmosphere.

**Mr. Vanna Boupha**, Head of the Cabinet Office of the CCOP and the GSWG Secretariat, stated that “organizational restructuring is an implementation of the Party and State's organizational guidelines at both the central and local levels to make the apparatus **more compact, streamlined, efficient, and strong**. The essence of this is to manage the organization in order to use resources in **economical, valuable, highly beneficial, and sustainable** manner, and to ensure that the activities of each sector proceed normally and continuously, especially the supported by development partners that are related to government organizational restructuring.

Mr. Vanna Boupha also urged all participants to convey the spirit and content of the discussions to their respective organizations for reporting and further implementation. Following the technical meeting, the Governance Sector Working Group will prepare the content for reporting to the GSWG Annual Meeting and the **14th Round Table Meeting**, which is scheduled to be held in **mid-November 2025**.

News by: Thounvilai OUDOMSINE